ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ
NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283

# ທຫລ-ທປຈ ສຳເລັດກອງປະຊຸມທາງໄກດ້ານວິຊາການ




ກອງປະຊຸມທາງໄກ 2 ຝ່າຍ ເພື່ອປຶກສາຫາລືກ່ຽວກັບບັນຫາເສດຖະກິດ-ການເງິນ-ເງິນຕາ ໄດ້ສຳເລັດໃນວັນທີ 17 ທັນວາ 2020 ລະຫວ່າງ ທະນາຄານແຫ່ງ ສປປ ລາວ (ທຫລ) ນຳໂດຍທ່ານ ນາງ ຟອງຈິນດາ ແສງສຸລິວົງ ຫົວໜ້າກົມຮ່ວມມືສາກົນ ພ້ອມດ້ວຍ ວິຊາການ ແລະ ທ່ານ ເຫວີນ ຈ່ຽງ ຢົ່ງ (WEN Jiang Yong) ຮອງຫົວໜ້າສາຂາທະນາຄານປະຊາຊົນຈີນ (ທປຈ) ສາຂາ ຄຸນມິ່ງ ພ້ອມດ້ວຍວິຊາການ.

ກອງປະຊຸມທັງ 2 ຝ່າຍໄດ້ມີຄວາມເປັນເອກະພາບກັນໃນຫຼາຍຫົວຂໍ້ສຳຄັນທີ່ສອດຄ່ອງກັບສະພາບຄວາມເປັນຈິງ ແລະ ການແຜ່ລະບາດຂອງພະຍາດ COVID-19; ວຽກງານການຊຳລະສະສາງເປັນສະກຸນເງິນທ້ອງຖິ່ນກ່ຽວກັບການດຳເນີນທຸລະກຳດ້ວຍ ເງິນກີບ-ເງິນຢວນ ໃນລະບົບຊື້-ຂາຍ; ການແລກປ່ຽນເງິນຕາຕ່າງປະເທດຂອງ 2 ຝ່າຍ; ວຽກງານຕ້ານການຟອກເງິນກ່ຽວກັບການຕິດຕາມກວດກາການຕ້ານການຟອກເງິນຂ້າມແດນ ແລະ ບັນຫາຕ່າງໆໃນການປ້ອງກັນ ລວມທັງມາດຕະການຕອບໂຕ້ຕ່າງໆ; ວຽກງານການເຂົ້າເຖິງການບໍລິການທາງດ້ານການເງິນ, ວິທີ ແລະ ຮູບແບບ ຂອງການເຂົ້າເຖິງການບໍລິການທາງດ້ານການເງິນຂອງ 2 ຝ່າຍ, ວຽກງານເຕັກໂນໂລຊີທາງດ້ານການເງິນທີ່ກ່ຽວຂ້ອງກັບມາດຕະຖານການບໍລິການດ້ານການເງິນ ແລະ ຄວາມເປັນໄປໄດ້ ໃນການຂະຫຍາຍຂອບການຮ່ວມມື ການໃຫ້ບໍລິການດ້ານທະນາຄານ ແລະ ຄຸນນະພາບຂອງການບໍລິການ.






ໃນຕອນທ້າຍກອງປະຊຸມ ທ່ານຫົວໜ້າກົມຮ່ວມມືສາກົນ, ທຫລ ໄດ້ຕີລາຄາສູງຕໍ່ກອງປະຊຸມຂອງ 2 ຝ່າຍດັ່ງກ່າວ ເຊິ່ງເປັນການເປີດທາງໃຫ້ທັງມີການສະເໜີບັນຫາ ແລະ ຄົ້ນຄວ້າວິທີການປັບປຸງວຽກງານໃຫ້ແທດເໝາະກັບສະພາບຕົວຈິງ ເຊິ່ງເປັນພື້ນຖານໃນການຮ່ວມມືໃນລວງເລິກໃນຕໍ່ໜ້າ.




# ຂ່າວ-ພາບ: ສົມອົກ ເຄນຄຳແພງ

ໃຊ້ເງິນກີບທົ່ວທັງຊາດສ້າງບົດບາດຄ່າເງິນກີບລາວ